ລັດວໍຊິງຕັນ
**DEPARTMENT OF CHILDREN, YOUTH, AND FAMILIES**
**(ພະແນກເດັກນ້ອຍ, ໄວໜຸ່ມ ແລະ ຄອບຄົວ)**
1500 Jefferson Street, SE ● P.O. Box 40975 ● Olympia WA 98504-0975

ວັນທີ 8 ມິຖຸນາ 2020
ຈົດໝາຍຫາພໍ່ແມ່

ກ່ອນອື່ນ, ໃຫ້ຂ້າພະເຈົ້າກ່າວວ່າ ຂ້າພະເຈົ້າຫວັງວ່າ ທ່ານ ແລະ ຄອບຄົວຂອງທ່ານປອດໄພ ແລະ ມີສຸຂະພາບດີ ໃນຂະນະທີ່ທ່ານອ່ານຈົດໝາຍສະບັບນີ້. ຂອບໃຈສໍາລັບຄວາມອົດທົນ ແລະ ຄວາມເຂົ້າໃຈຂອງທ່ານ ໃນຂະນະທີ່ພວກເຮົາປັບຕົວຕໍ່ການປ່ຽນແປງທີ່ຍິ່ງໃຫຍ່ໃນຊີວິດລະຫວ່າງສອງສາມເດືອນທີ່ຜ່ານມາ ຄືກັນກັບທ່ານ. ພວກເຮົາຊື່ນຊົມຄວາມຄິດບວກ, ການປັບຕົວ ແລະ ຄວາມຍືດຍຸ່ນຂອງຄອບຄົວໃນລະຫວ່າງເວລາທີ່ຫຍຸ້ງຍາກເຫຼົ່ານີ້. ພວກເຮົາເຂົ້າໃຈວ່າ ໃນຂະນະທີ່ພວກເຈົ້າບາງຄົນເຂົ້າໃຈການປ່ຽນແປງສູ່ບໍລິການທີ່ຄືກັບຂອງຈິງ, ການຢຸດພັກບໍລິການສ່ວນບຸກຄົນແມ່ນລໍາບາກສໍາລັບຄົນອື່ນ.

ອີງຕາມຜົນກະທົບໃນເວລາທີ່ຜ່ານມາຂອງ ໂຄວິດ-19 ໃນ ລັດວໍຊິງຕັນ ແລະ ຄວາມກັງວົນສໍາລັບສຸຂະພາບ ແລະ ຄວາມເປັນສຸກຂອງເດັກນ້ອຍ ແລະ ຄອບຄົວທີ່ຮັບບໍລິການ ແລະ ພະນັກງານທີ່ສະໜອງໃຫ້ແກ່ພວກເຂົາ, ຫ້ອງການແຫ່ງລັດຂອງ ໂຄງການສະໜັບສະໜູນເບື້ອງຕົ້ນສໍາລັບເດັກອ່ອນ ແລະ ເດັກຮຽນຍ່າງ (ESIT) ໄດ້ຕັດສິນໃຈວ່າ ບໍລິການສ່ວນບຸກຄົນ ພ້ອມດ້ວຍຂໍ້ຍົກເວັ້ນທີ່ຈໍາກັດ ຈະສືບຕໍ່ຢຸດພັກ.

ພວກເຮົາໄດ້ຍິນວ່າ ພວກເຈົ້າຫຼາຍຄົນທີ່ປ່ຽນເປັນບໍລິການທີ່ຄືກັບຂອງຈິງ ໄດ້ຮັບການປັບຕົວ, ການເຂົ້າເຖິງບໍລິການທີ່ງ່າຍຂຶ້ນ ແລະ ປັບປຸງການຝຶກອົບຮົມຈາກຜູ້ສະໜອງ. ມີການຄົ້ນຄວ້າຫຼາຍຢ່າງທີ່ສະໜັບສະໜູນປະສິດທິພາບຂອງບໍລິການທີ່ຄືກັບຂອງຈິງ ແລະ ວິທີການສົ່ງບໍລິການນີ້ຈະສືບຕໍ່ເປັນທາງເລືອກ.

ຖ້າທ່ານເປັນພໍ່ແມ່ທີ່ໄດ້ຕັດສິນໃຈລໍຖ້າຮັບບໍລິການຈົນກວ່າພວກເຂົາຈະໄດ້ຮັບບໍລິການສ່ວນບຸກຄົນ, ຂ້າພະເຈົ້າສົ່ງເສີມໃຫ້ທ່ານລອງໃຊ້ບໍລິການທີ່ຄືກັບຂອງຈິງ. *ພວກເຮົາຕ້ອງການແນ່ໃຈວ່າ ເວລາທີ່ສໍາຄັນບໍ່ໄດ້ສູນເສຍໄປໃນລະຫວ່າງຊ່ວງເວລາທີ່ມີປ່ຽນແປງດ້ານພັດທະນາຢ່າງໄວວາໃນຊີວິດຂອງເດັກນ້ອຍຂອງທ່ານ.* ພວກເຮົາຍັງຮັບຮູ້ວ່າ ບໍ່ແມ່ນຄວາມຕ້ອງການທັງໝົດສາມາດຖືກບັນລຸໄດ້ຜ່ານທາງບໍລິການທີ່ຄືກັບຂອງຈິງ. ເພື່ອທີ່ຈະບັນລຸຄວາມຕ້ອງການສ່ວນຕົວຂອງ*ເດັກນ້ອຍ*ແລະ ຄອບຄົວທັງໝົດ ພວກເຮົາກໍາລັງພັດທະນາລະບົບເພື່ອລະບຸການຍົກເວັ້ນສໍາລັບເດັກນ້ອຍທີ່ຕ້ອງການບໍລິການສ່ວນບຸກຄົນທີ່ຈໍາກັດເວລາ ກ່ອນທີ່ຈະມີຜົນກະທົບທີ່ແຜ່ລາມຫຼາຍຂຶ້ນໃນບໍລິການສ່ວນບຸກຄົນ. ພວກເຮົາຈະຕັດສິນໃຈວ່າ ບໍລິການດັ່ງກ່າວສາມາດສະໜອງໃຫ້ໄດ້ຢູ່ໃສ ແລະ ດ້ວຍວິທີໃດ ໃນຂະນະທີ່ຮັບປະກັນຄວາມປອດໄພຂອງເດັກນ້ອຍ, ພໍ່ແມ່ ແລະ ພະນັກງານທີ່ໃຫ້ບໍລິການ. ຖ້າທ່ານເຊື່ອວ່າເດັກນ້ອຍຂອງທ່ານຕ້ອງການບໍລິການສ່ວນບຸກຄົນທີ່ມີຢູ່ຢ່າງຈໍາກັ

ດເຫຼົ່ານີ້, ກະລຸນາຕິດຕໍ່ຜູ້ສະໜອງບໍລິການຂອງທ່ານເພື່ອສົນທະນາກ່ຽວກັບເວລາ ແລະ ທາງເລືອກທີ່ອາດມີໃຫ້.

ເພື່ອທີ່ຈະສະໜັບສະໜູນການວາງແຜນສໍາລັບການກັບຄືນມາຢ່າງປອດໄພໃນບໍລິການສ່ວນຕົວ, ກຸ່ມເຮັດວຽກນ້ອຍທີ່ລວມເຖິງທັງຜູ້ສະໜອງບໍລິການ ແລະ ຄອບຄົວ ແມ່ນກໍາລັງພົບປະກັນເພື່ອພັດທະນາແຜນສໍາລັບ ESIT ທີ່ສອດຄ່ອງກັບ ການເລີ່ມຕົ້ນຢ່າງປອດໄພຂອງ ຜູ້ວ່າການລັດ Inslee.

ເປົ້າໝາຍສໍາລັບກຸ່ມເຮັດວຽກນີ້ລວມເຖິງ:

1. ພັດທະນາຄໍາແນະນໍາສໍາລັບຂໍ້ຍົກເວັ້ນທີ່ຈະນໍາໃຊ້, ສິ່ງນັ້ນຈະເຮັດໃຫ້ກຸ່ມນ້ອຍໆຂອງເດັກອ່ອນ ແລະ ເດັກນ້ອຍຮຽນຍ່າງ ຜູ້ທີ່ມີຄວາມຈໍາເປັນອັນຮີບດ່ວນ, ໄລຍະສັ້ນເພື່ອຮັບເອົາການສະໜັບສະໜູນສ່ວນບຸກຄົນ.
2. ການພັດທະນາແຜນເພື່ອການປ່ຽນແປງສູ່ບໍລິການສ່ວນບຸກຄົນ ໂດຍນໍາໃຊ້ວິທີການປະຈໍາພາກເພື່ອນໍາໃຊ້ໃຫ້ສອດຄ່ອງກັບ ແຜນການເລີ່ມຕົ້ນທີ່ປອດໄພຂອງຜູ້ວ່າການລັດ Inslee.

ແຜນການຂອງພວກເຮົາຈະປະກອບມີຄໍາຕິຊົມຈາກຜູ້ສະໜອງບໍລິການຂອງ ESIT ຈາກທົ່ວລັດ ແລະ ທີ່ສໍາຄັນທີ່ສຸດແມ່ນຈາກຄອບຄົວ.

ໃນອີກບໍ່ດົນ ພວກເຮົາຈະແຈກຢາຍການສໍາຫຼວດຄອບຄົວທີ່ຈະຊ່ວຍໃຫ້ພວກເຮົາເຂົ້າໃຈປະສົບການ ແລະ ຄວາມທ້າທາຍຂອງຄອບຄົວທີ່ກໍາລັງຮັບບໍລິການ ESIT ໃນລະຫວ່າງເວລາທີ່ຫຍຸ້ງຍາກທີ່ສຸດນີ້.

ຖ້າທ່ານມີຄໍາຖາມ, ຄວາມກັງວົນ ຫຼື ແນວຄວາມຄິດທີ່ທ່ານຕ້ອງການແບ່ງປັນກັບກຸ່ມເຮັດວຽກ, ກະລຸນາຕິດຕໍ່ຂ້າພະເຈົ້າທີ່ laurie.thomas@dcyf.wa.gov.

ພວກເຮົາຂອບໃຈສໍາລັບຄວາມອົດທົນຂອງທ່ານ ໃນຂະນະທີ່ພວກເຮົາເຮັດວຽກຜ່ານສິ່ງນີ້ຮ່ວມກັນ.

ດ້ວຍຄວາມຮັກແພງ,

Laurie Thomas
ຜູ້ບໍລິການ
ໂຄງການສະໜັບສະໜູນເບື້ອງຕົ້ນສໍາລັບເດັກອ່ອນ ແລະ ເດັກຮຽນຍ່າງ (ESIT)